ວັນທີ

ຊື່ ແລະ ນາມສະກຸນ ຂອງພໍ່ແມ່ ຫຼືຜູ້ປົກຄອງ

ຖະໜົນທີ່ພໍ່ແມ່ ຫຼືຜູ້ປົກຄອງ ອາໃສຢູ່

ເມືອງ, ຣັຖ, ລະຫັດປະເທດທີ່ ພໍ່ແມ່ ຫຼືຜູ້ປົກຄອງ ອາໃສຢູ່

ຮຽນ ພໍ່ແມ່ ຫຼືຜູ້ປົກຄອງ ທີ່ຮັກແພງ

ປັດຈຸບັນ ລູກຫຼານຂອງທ່ານກຳລັງຖືກບົ່ງໂຕໃຫ້ເຂົ້າຮ່ວມ ຫຼືລົງທະບຽນໃນ:

- ☐ ໂຄງການທີ່ໃຊ້ສອງພາສາ
- ☐ ໂຄງການທີ່ໃຊ້ພາສາອັງກິດເປັນພາສາທີສອງ (ESL)

ເພື່ອພັດທະນາຄວາມສາມາດທາງດ້ານພາສາອັງກິດຂອງລາວ ເພື່ອໃຫ້ບັນລຸມາດຕະຖານຂອງການສຶກສາຂັ້ນສູງ.

ແຕ່ລະເມືອງຂອງໂຮງຮຽນ ທີ່ໃຫ້ບໍລິການແກ່ນັກຮຽນຜູ້ທີ່ຮຽນພາສາອັງກິດ (ELs) ມີຄວາມຈຳເປັນທີ່ຈະທົດສອບນັກຮຽນເຫຼົ່ານັ້ນ ດ້ວຍການປະເມີນຜົນແບບຮອບດ້ານ ແລະການສື່ສານໃນພາສາອັງກິດລະຫວ່າງຣັຖ-ຕໍ່-ຣັຖ ສຳລັບນັກຮຽນພາສາອັງກິດ® (ACCESS for ELLs). ຜົນຂອງ ACCESS for ELLs ຖືກນຳໃຊ້ເພື່ອກຳນົດວ່າ ເມືອງຂອງພວກເຮົາກຳລັງບັນລຸເປົ້າໝາຍ ທັກສະຄວາມສາມາດທາງດ້ານພາສາອັງກິດໃນທົ່ວຣັຖ ຫຼືບໍ່.

ກົດໝາຍວ່າດ້ວຍການບໍ່ປະປ່ອຍເດັກນ້ອຍໄວ້ເບື້ອງຫຼັງ (NCLB - No Child Left Behind) ປີ 2001 ໄດ້ສ້າງຈຸດປະສົງໃນ ການປະສົບຜົນສຳເລັດທີ່ສາມາດວັດແທກໄດ້ໃນແຕ່ລະປີ (AMAO - Annual Measurable Achievement Objectives) ເພື່ອໃຫ້ບັນດາເມືອງສາມາດວັດແທກຄວາມກ້າວໜ້າທາງດ້ານ ELs ຂອງພວກເຂົາ. AMAOs ທັງສາມ ທີ່ໄດ້ຖືກສ້າງຂຶ້ນໂດຍ NCLB ມີ:

- AMAO 1: ຄວາມກ້າວໜ້າ - ເມືອງສາມາດບັນລຸໄດ້ຕາມເປີເຊັນຂອງ ELs ທີ່ເຮັດໃຫ້ມີຄວາມກ້າວໜ້າທາງດ້ານການ ຮຽນພາສາອັງກິດ.
- AMAO 2: ທັກສະຄວາມສາມາດ - ເມືອງສາມາດບັນລຸໄດ້ຕາມເປີເຊັນຂອງ ELs ທີ່ຖືວ່າມີທັກສະຄວາມສາມາດທາງ ດ້ານພາສາອັງກິດ.
- AMAO 3: ຄວາມກ້າວໜ້າປະຈຳປີທີ່ພຽງພໍ (AYP - Adequate Yearly Progress) ສຳລັບ ELs – ELs ບັນລຸ ເປົ້າໝາຍການປະສົບຜົນສຳເລັດໃນການປະເມີນຜົນວິຊາຄະນິດສາດ ແລະ ຫັດອ່ານຂອງຣັຖ ແລະ ອັດຕາຂອງການຈົບ ການສຶກສາ.

ໃນປີນີ້, ຊື່ຂອງເມືອງ ຖືກກຳນົດໃຫ້ສຳລັບການປັບປຸງການບໍລິການຂອງ EL ຍ້ອນວ່າ:

- ☐ ມີພຽງແຕ່ % ຂອງ ELs ທີ່ເຮັດໃຫ້ມີຄວາມກ້າວໜ້າໃນການຮຽນຮູ້ພາສາອັງກິດ ເຖິງວ່າເປົ້າໝາຍທີ່ຄາດໄວ້ນັ້ນ ແມ່ນ %.

- ☐ ມີພຽງແຕ່ % ຂອງ ELs ທີ່ກາຍເປັນທັກສະຄວາມສາມາດທາງດ້ານພາສາອັງກິດ ເຖິງວ່າປົ້າໝາຍທີ່ຄາດໄວ້ນັ້ນແມ່ນ %.
- ☐ ເມືອງບໍ່ໄດ້ມີເປົ້າໝາຍສຳລັບ ELs ໃນ:
  - ☐ ການເຂົ້າຮ່ວມໃນຄະນິດສາດຂອງ ການປະເມີນຜົນແບບຄົບຖ້ວນຂອງມິນນີໂຊຕາ (MCA - Minnesota Comprehensive Assessments)
  - ☐ ການເຂົ້າຮ່ວມໃນການອ່ານຂອງ ການປະເມີນຜົນແບບຄົບຖ້ວນຂອງມິນນີໂຊຕາ (MCA - Minnesota Comprehensive Assessments)
  - ☐ ຄວາມສາມາດທາງດ້ານຄະນິດສາດຂອງ ການປະເມີນຜົນແບບຄົບຖ້ວນຂອງມິນນີໂຊຕາ (MCA - Minnesota Comprehensive Assessments)
  - ☐ ຄວາມສາມາດທາງດ້ານການອ່ານຂອງ ການປະເມີນຜົນແບບຄົບຖ້ວນຂອງມິນນີໂຊຕາ (MCA - Minnesota Comprehensive Assessments)
  - ☐ ອັດຕາການເຂົ້າຮ່ວມ
  - ☐ ອັດຕາການຈົບການສຶກສາ

ຕື່ມຂໍ້ມູນເພີ່ມເຕີມ ຫຼືໃສ່ເຫດຜົນສະເພາະວ່າ ເປັນຫຍັງເມືອງຈຶ່ງບໍ່ສາມາດບັນລຸໄດ້ຕາມ AMAO

ເພື່ອປັບປຸງໂຄງການຂອງພວກເຮົາສຳລັບ ELs, ພວກເຮົາ... (ອະທິບາຍວ່າໂຮງຮຽນກຳລັງເຮັດຫຍັງເພື່ອແກ້ໄຂບັນຫາ ແລະເມືອງກຳລັງຊ່ວຍໄດ້ແນວໃດ).

ທ່ານສາມາດສະໜັບສະໜູນຄວາມພະຍາຍາມຂອງພວກເຮົາໂດຍ... (ອະທິບາຍວ່າ ພໍ່ແມ່ຜູ້ປົກຄອງສາມາດມີສ່ວນຮ່ວມໃນການແກ້ໄຂບັນຫາກ່ຽວກັບການສຶກສາ ທີ່ເປັນສາເຫດໃຫ້ໂຮງຮຽນຖືກບົ່ງໂຕ ໄດ້ແນວໃດ).

ພວກເຮົາຄາດວ່າ ການລິເລີ່ມເຫຼົ່ານີ້ ໃນທີ່ສຸດຈະເພີ່ມອັດຕາການປະສົບຜົນສຳເລັດຂອງ EL ໃນທົ່ວເມືອງ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບຄວາມກ້າວໜ້າຂອງນັກຮຽນຂອງທ່ານໃນການພັດທະນາທັກສະທາງດ້ານພາສາອັງກິດ ຫຼືຈະມີສ່ວນຮ່ວມເພີ່ມເຕີມແນວໃດຢູ່ໂຮງຮຽນຂອງລາວ, ຕິດຕໍ່ຫາ:

ຊື່ ແລະ ໝາຍເລກໂທລະສັບຕິດຕໍ່

ດ້ວຍຄວາມນັບຖື,

ຊື່ຂອງເຈົ້າໜ້າທີ່ຂອງເມືອງ, ຕຳແໜ່ງ